ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 382 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 30 ຕຸລາ 2018

# ແຈ້ງການ

**ເຖິງ:** ສະຖາບັນການເງິນ ໃນຂອບເຂດທົ່ວປະເທດ

**ເລື່ອງ:** ຫ້າມສະຖາບັນການເງິນໃນຂອບເຂດທົ່ວປະເທດ ດຳເນີນທຸລະກຳທີ່ກ່ຽວຂ້ອງກັບ ເງິນຄຣິບໂຕ.

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບປັບປຸງເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ກົດໝາຍວ່າດ້ວຍລະບົບການຊຳລະ ສະບັບເລກທີ 32/ສພຊ, ລົງວັນທີ 07 ພະຈິກ 2017.

ຫ້ອງການທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງ ສະຖາບັນການເງິນ (ທະນາຄານທຸລະກິດ ແລະ ສະຖາບັນການເງິນຕ່າງໆ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ) ໃນຂອບເຂດທົ່ວປະເທດ ຊາບວ່າ: ປະຈຸບັນ ການພັດທະນາທາງດ້ານເຕັກໂນໂລຊີມີຄວາມກ້າວໜ້າ ແລະ ຂະຫຍາຍຢ່າງກວ້າງຂວາງໃນຈັງຫວະທີ່ໄວ ໂດຍໄດ້ມີການນຳເອົາເຕັກໂນໂລຊີ Blockchain ມາໃຊ້ໃນການດຳເນີນທຸລະກຳທາງດ້ານການເງິນ ແລະ ພັດທະນາຮູບແບບການໃຫ້ບໍລິການທາງການເງິນໃນລັກສະນະຕ່າງໆ ລວມທັງການກຳເນີດຂອງເງິນຄຣິບໂຕ (Cryptocurrency) ເປັນຕົ້ນແມ່ນ Bitcoin, Ethereum, Litecoin ແລະ ອື່ນໆ. ໃນ ສປປ ລາວ ກໍເລີ່ມມີການໂຄສະນາຊວນເຊື່ອໃຫ້ມີການນຳໃຊ້ເງິນຄຣິບໂຕເຂົ້າໃນການຊຳລະຄ່າສິນຄ້າ ແລະ ບໍລິການ, ມີການໂຄສະນາໃຫ້ລົງທຶນ, ຊື້-ຂາຍ ຫຼື ດຳເນີນທຸລະກຳທາງການເງິນທີ່ກ່ຽວຂ້ອງກັບເງິນຄຣິບໂຕ ໂດຍອ້າງວ່າເປັນເງິນດິຈິຕອນ (Digital Currency) ທີ່ມີຄົນນິຍົມໃຊ້ໃນທົ່ວໂລກ.

ຫ້ອງການທະນາຄານແຫ່ງ ສປປ ລາວ ຈຶ່ງຫ້າມສະຖາບັນການເງິນທຸກແຫ່ງຖືຄອງ, ດຳເນີນທຸລະກຳ ຫຼື ມີສ່ວນຮ່ວມໃນການສະໜັບສະໜູນການເຮັດທຸລະກຳທີ່ກ່ຽວຂ້ອງກັບເງິນຄຣິບໂຕ ດັ່ງລຸ່ມນີ້:

1. ຫ້າມລົງທຶນ ຫຼື ຊື້-ຂາຍ ເງິນຄຣິບໂຕ ເພື່ອຜົນປະໂຫຍດຂອງສະຖາບັນການເງິນເອງ ຫຼື ຜົນປະໂຫຍດຂອງລູກຄ້າ;
2. ຫ້າມໃຫ້ບໍລິການຮັບແລກປ່ຽນເງິນຄຣິບໂຕ ຜ່ານຊ່ອງທາງຕ່າງໆຂອງການໃຫ້ບໍລິການ ຂອງຕົນ;
3. ຫ້າມສ້າງສູນກາງແລກປ່ຽນຊື້-ຂາຍ (Platform) ຫຼື ເປັນສື່ກາງໃຫ້ລູກຄ້າເຂົ້າໄປເຮັດທຸລະກຳກ່ຽວກັບ ເງິນຄຣິບໂຕ ລະຫວ່າງກັນ;
4. ຫ້າມໃຫ້ລູກຄ້ານຳໃຊ້ບັດທຸກປະເພດ ເປັນຕົ້ນບັດສິນເຊື່ອ (Credit Card) ໃນການຊື້ເງິນຄຣິບໂຕ;
5. ຫ້າມສະໜັບສະໜູນ ຫຼື ໃຫ້ຄຳປຶກສາກັບລູກຄ້າກ່ຽວກັບການລົງທຶນ ຫຼື ແລກປ່ຽນເງິນຄຣິບໂຕ.

ນອກຈາກນີ້, ສະຖາບັນການເງິນຕ້ອງ ເພີ່ມຄວາມລະມັດລະວັງໃນການໃຫ້ບໍລິການດ້ານເງິນຝາກ ແລະ ດ້ານສິນເຊື່ອ ທີ່ກ່ຽວຂ້ອງກັບການເປີດບັນຊີ ຫຼື ການນຳໃຊ້ບັນຊີ ທີ່ອາດນຳໄປສູ່ການດຳເນີນທຸລະກຳທີ່ກ່ຽວຂ້ອງກັບເງິນຄຣິບໂຕ, ພ້ອມກັບໃຫ້ເອົາໃຈໃສ່ກ່ຽວກັບການຊອກຮູ້ຂໍ້ມູນລູກຄ້າ (Know Your Customer: KYC) ແລະ ດຳເນີນການກວດສອບຂໍ້ມູນລູກຄ້າ (Customer Due Diligence: CDD) ຢ່າງເຂັ້ມງວດ; ລວມທັງໃຫ້ລະມັດລະວັງການຖືກນຳໃຊ້ຊື່ ຫຼື ໂລໂກຂອງສະຖາບັນການເງິນເຂົ້າໃນການໂຄສະນາຊວນເຊື່ອຂອງກຸ່ມຄົນບໍ່ຫວັງດີ ຊຶ່ງອາດສ້າງຄວາມເສຍຫາຍໃຫ້ແກ່ສະຖາບັນການເງິນ ຫຼື ຂະແໜງທະນາຄານໃນ ສປປ ລາວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ຫົວໜ້າຫ້ອງການ**

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ

**ສາມາດແຈ້ງ ຫຼື ສອບຖາມຂໍ້ມູນເພີ່ມເຕີມ:**

**ໂທ: 021 253595 ແລະ 253597**

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS

ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la